ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 04 /ລບ
ນະຄອນຫຼວງວຽງຈັນ, ວັນທີ 11 ມັງກອນ 2023

# ດຳລັດ
# ວ່າດ້ວຍການກຳນົດຂະໜາດ
# ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ໜັງສືສະເໜີຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1596/ອຄ, ລົງວັນທີ 09 ພະຈິກ 2022.

ລັດຖະບານ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍມາດຕາ 2 ຂອງກົດໝາຍວ່າດ້ວຍການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການກຳນົດຂະໜາດຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມຊັດເຈນ ແລະ ແທດ ເໝາະກັບສະພາບເສດຖະກິດຂອງ ສປປ ລາວ ໃນແຕ່ລະໄລຍະ, ແນໃສ່ປະຕິບັດນະໂຍບາຍສົ່ງເສີມວິສາຫະກິດດັ່ງກ່າວ ໃຫ້ຖືກເປົ້າໝາຍ ແລະ ມີຈຸດສຸມ, ປະກອບສ່ວນໃນການພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຂັ້ມແຂງ ແລະ ມີຄວາມຍືນຍົງ.

**ມາດຕາ 2 ການກຳນົດຂະໜາດ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການກຳນົດຂະໜາດ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນການຈັດແບ່ງວິສາຫະກິດ ໂດຍອີງໃສ່ເງື່ອນໄຂດ້ານ ຈຳນວນແຮງງານສະເລ່ຍໃນປີ ຫຼື ມູນຄ່າຊັບສິນທັງໝົດ ຫຼື ລວມຍອດລາຍຮັບທຸລະກິດປະຈຳປີຂອງວິສາຫະກິດ ທີ່ດຳເນີນກິດຈະການໃນ ຂະແໜງການຜະລິດສິນຄ້າ, ຂະແໜງການຄ້າ ແລະ ຂະແໜງການບໍລິການ.

ໃນກໍລະນີທີ່ຫົວໜ່ວຍວິສາຫະກິດໜຶ່ງ ມີເງື່ອນໄຂກຳນົດເປັນຫຼາຍຂະໜາດ ໃຫ້ຖືເອົາລວມຍອດລາຍຮັບທຸລະກິດປະຈຳປີ ເປັນເງື່ອນໄຂຕັດສິນ.

**ມາດຕາ 3 ຈຸນລະວິສາຫະກິດ**

ຈຸນລະວິສາຫະກິດ ແມ່ນວິສາຫະກິດທີ່ມີເງື່ອນໄຂໃດໜຶ່ງ ດັ່ງນີ້:

| ຂະແໜງວິສາຫະກິດ | ຈຳນວນແຮງງານ ສະເລ່ຍໃນປີ (ຄົນ) | ມູນຄ່າຊັບສິນທັງໝົດ (ກີບ) | ລວມຍອດລາຍຮັບທຸລະກິດ ປະຈຳປີ (ກີບ) |
|---|---|---|---|
| ການຜະລິດສິນຄ້າ | 1 - 5 | ບໍ່ເກີນ 120.000.000 | ບໍ່ເກີນ 400.000.000 |
| ການຄ້າ | 1 - 5 | ບໍ່ເກີນ 180.000.000 | ບໍ່ເກີນ 400.000.000 |
| ການບໍລິການ | 1 - 5 | ບໍ່ເກີນ 240.000.000 | ບໍ່ເກີນ 400.000.000 |

### ມາດຕາ 4 ວິສາຫະກິດຂະໜາດນ້ອຍ

ວິສາຫະກິດຂະໜາດນ້ອຍ ແມ່ນວິສາຫະກິດທີ່ມີເງື່ອນໄຂໃດໜຶ່ງ ດັ່ງນີ້:

| ຂະແໜງວິສາຫະກິດ | ຈຳນວນແຮງງານ ສະເລ່ຍໃນປີ (ຄົນ) | ມູນຄ່າຊັບສິນທັງໝົດ (ກີບ) | ລວມຍອດລາຍຮັບທຸລະກິດ ປະຈຳປີ (ກີບ) |
|---|---|---|---|
| ການຜະລິດສິນຄ້າ | 6 - 50 | ບໍ່ເກີນ 1.200.000.000 | ບໍ່ເກີນ 3.000.000.000 |
| ການຄ້າ | 6 - 50 | ບໍ່ເກີນ 1.200.000.000 | ບໍ່ເກີນ 4.500.000.000 |
| ການບໍລິການ | 6 - 50 | ບໍ່ເກີນ 1.800.000.000 | ບໍ່ເກີນ 2.250.000.000 |

### ມາດຕາ 5 ວິສາຫະກິດຂະໜາດກາງ

ວິສາຫະກິດຂະໜາດກາງ ແມ່ນວິສາຫະກິດທີ່ມີເງື່ອນໄຂໃດໜຶ່ງ ດັ່ງນີ້:

| ຂະແໜງວິສາຫະກິດ | ຈຳນວນແຮງງານ ສະເລ່ຍໃນປີ (ຄົນ) | ມູນຄ່າຊັບສິນທັງໝົດ (ກີບ) | ລວມຍອດລາຍຮັບທຸລະກິດ ປະຈຳປີ (ກີບ) |
|---|---|---|---|
| ການຜະລິດສິນຄ້າ | 51 - 99 | ບໍ່ເກີນ 4.800.000.000 | ບໍ່ເກີນ 6.000.000.000 |
| ການຄ້າ | 51 - 99 | ບໍ່ເກີນ 4.800.000.000 | ບໍ່ເກີນ 9.000.000.000 |
| ການບໍລິການ | 51 - 99 | ບໍ່ເກີນ 7.200.000.000 | ບໍ່ເກີນ 6.000.000.000 |

### ມາດຕາ 6 ການທົບທວນ

ກະຊວງອຸດສາຫະກຳ ແລະ ການຄ້າ ດຳເນີນການທົບທວນບັນດາເງື່ອນໄຂໃນການກຳນົດຂະໜາດ ຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຕ່ລະໄລຍະທີ່ເຫັນວ່າມີຄວາມຈຳເປັນ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາຮັບຮອງ ແລະ ປະກາດໃຊ້.

ມາດຕາ 7 ການຈັດຕັ້ງປະຕິບັດ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກລະບຽບການ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ມາດຕາ 8 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 28 ກຸມພາ 2023 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການຈັດແບ່ງຂະໜາດ ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**